LUXEMBOURG
TRADE & INVEST

# ວິທີສ້າງຕັ້ງທຸລະກິດໃນປະເທດ ລຸກຊຳບວກ




HOUSE OF
**ENTREPRENEURSHIP**
powered by the Luxembourg Chamber of Commerce

# ວິທີສ້າງຕັ້ງທຸລະກິດໃນປະເທດ ລຸກຊໍາບວກ

1. ໃບອະນຸຍາດດໍາເນີນທຸລະກິດ

2. ຮ່າງເອກະສານດ້ານກົດໝາຍ

3. ການກວດຄົນເຂົ້າ-ອອກເມືອງ

4. ມາດຕະການດ້ານການເງິນ ແລະ ການຊ່ວຍເຫຼືອ

5. ອາກອນ

6. ປະກັນສັງຄົມ

7. ການຕັ້ງຖິ່ນຖານ

8. ການສຶກສາໃນປະເທດລຸກຊໍາບວກ

# 1. ບອະນຸຍາດດຳເນີນທຸລະກິດ

ທຸກໆທຸລະກິດທີ່ສ້າງຕັ້ງຢູ່ປະເທດລຸກຊຳບວກຕ້ອງໄດ້ຮັບໃບອະນຸຍາດທີ່ຈຳເປັນຈາກລັດຖະບານ. ກິດຈະການການຄ້າ, ກິດຈະການທີ່ໃຊ້ທັກສະຝີມື ແລະ ກິດຈະການອຸດສາຫະກຳ ພ້ອມທັງອາຊີບເສລີບາງປະເພດ ແມ່ນຈຳເປັນຕ້ອງມີໃບອະນຸຍາດດຳເນີນທຸລະກິດ.

## ກິດຈະການການຄ້າ

**ກະຊວງເສດຖະກິດ**ຈະອອກ ໃບອະນຸຍາດດຳເນີນທຸລະກິດ ໃຫ້ແກ່ກິດຈະການທົ່ວໄປ ແລະ ກິດຈະການທີ່ຈະດຳເນີນການເປັນເວລາຍາວນານທີ່ນອນຢູ່ໃນຂົງເຂດທີ່ມີສິດສ້າງຕັ້ງ. ເພື່ອດຳເນີນກິດຈະການຕ່າງໆດັ່ງກ່າວໃນປະເທດລຸກຊຳບວກ, ຜູ້ສະໝັກຕ້ອງໄດ້ປະຕິບັດບາງເງື່ອນໄຂໃນດ້ານຄຸນວຸດທິ ແລະ ຫຼັກຈັນຍາບັນໃນວິຊາຊີບຂອງພວກເຂົາ ແລະ ສາມາດສະແດງໃຫ້ເຫັນວ່າ ທຸລະກິດຂອງພວກເຂົາມີສະຖານທີ່ຕັ້ງທີ່ແນ່ນອນຢູ່ໃນປະເທດລຸກຊຳບວກ. ຄຸນວຸດທິດ້ານວິຊາຊີບທີ່ຕ້ອງການແມ່ນອີງຕາມປະເພດລັກສະນະຂອງທຸລະກິດ ນັບຕັ້ງແຕ່ບໍ່ຈຳເປັນຕ້ອງມີໃບຢັ້ງຢືນ ຈົນເຖິງ ຈຳເປັນຕ້ອງມີໃບປະກາດສະນີຍາບັດວິຊາສະເພາະ ແລະ ປະລິນຍາຈາກມະຫາວິທະຍາໄລ.

ໃບອະນຸຍາດດຳເນີນທຸລະກິດທີ່ອອກໃຫ້ຫຼາຍທີ່ສຸດແມ່ນກ່ຽວຂ້ອງກັບ**ກິດຈະການການຄ້າ** (ການຂາຍຍົກ, ການຂາຍຍ່ອຍ, ການໃຫ້ບໍລິການດ້ານການຄ້າ, ການໃຫ້ບໍລິການທີ່ໃຊ້ຄວາມຮູ້ສັບສິນທາງປັນຍາ ແລະ ສະໜອງໃຫ້ໂດຍບໍລິສັດ, ແລະກິດຈະການທາງດ້ານອຸດສາຫະກຳ).

## ກິດຈະການອື່ນໆທີ່ຖືກຄວບຄຸມ

ກິດຈະການທີ່ຖືກຄວບຄຸມຈຳເປັນຕ້ອງມີໃບປະກາດສະນີຍາບັດວິຊາຊີບ ແລະ ການຂໍອະນຸຍາດເພີ່ມເຕີມ. ຍົກຕົວຢ່າງ, ສະຖາບັນການເງິນ ແລະ ບໍລິສັດເຕັກໂນໂລຊີການເງິນ ແມ່ນຖືກຄວບຄຸມໂດຍ CSSF (**"ຄະນະກຳມະການຄຸ້ມຄອງຂະແໜງການເງິນ"**).

ບໍລິສັດທີ່ດຳເນີນກິດຈະການທີ່ສາມາດສົ່ງຜົນກະທົບຕໍ່ຜູ້ໃຊ້ແຮງງານ, ຄົນທົ່ວໄປ ແລະ/ຫຼື ສິ່ງແວດລ້ອມ ຈຳເປັນຕ້ອງມີໃບອະນຸຍາດການດຳເນີນງານສະເພາະ - ໂດຍທົ່ວໄປແລ້ວເອີ້ນວ່າ ໃບອະນຸຍາດ "commodo/incommodo".

ສະຖາບັນອື່ນໆ ເຊັ່ນ ກະຊວງສາທາ ແລະ ສະພາທະນາຍຄວາມແຫ່ງລຸກຊຳບວກ ກໍ່ຄວບຄຸມບາງກິດຈະການສະເພາະເຊັ່ນກັນ.

ເພື່ອສຳເລັດຂັ້ນຕອນການສ້າງຕັ້ງທຸລະກິດໃນປະເທດລຸກຊຳບວກ, ບໍລິສັດຈຳເປັນຕ້ອງຂຶ້ນທະບຽນກັບສະຖາບັນຕ່າງໆທີ່ຈຳເປັນເຊັ່ນ ຫ້ອງການລົງທະບຽນທຸລະກິດລຸກຊຳບວກ, ຕັ້ງຢູ່ ສູນປະກັນສັງຄົມຮ່ວມ ແລະ ກັບ ເຈົ້າໜ້າທີ່ສ່ວຍສາອາກອນ.

ອັດຕາຜົນຜະລິດຕໍ່ແຮງງານທີ່ສູງທີ່ສຸດເປັນອັນດັບທີ 1 ໃນໂລກ (ລວມຍອດຜະລິດຕະພັນພາຍໃນ (GDP) ທີ່ສ້າງຂຶ້ນໄດ້ຕໍ່ໜຶ່ງຊົ່ວໂມງເຮັດວຽກ)

ແຫຼ່ງຂໍ້ມູນ: ດັດສະນີໂລກາພິວັດປີ 2019 ຂອງ KOF



ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:
ສຳນັກງານຜູ້ປະກອບການ (House of Entrepreneurship)
ອີເມລ: info@houseofentrepreneurship.lu
ເບີໂທ: +352 42 39 39 330

# 2. ຮ່າງເອກະສານກົດໝາຍ

ບໍ່ວ່າທຸລະກິດຈະມີຂະໜາດ ແລະ ມີລັກສະນະແບບໃດກໍ່ຕາມ, ສິ່ງທີ່ສໍາຄັນທີ່ຜູ້ປະກອບການຕ້ອງເຮັດແມ່ນການປະກອບ ຮ່າງເອກະສານກົດໝາຍ ທີ່ແທດເໝາະກັບກິດຈະການຂອງພວກເຂົາ (ວິສາຫະກິດສ່ວນບຸກຄົນ ຫຼື ບໍລິສັດ).

## ວິສາຫະກິດສ່ວນບຸກຄົນ

ການສ້າງຕັ້ງວິສາຫະກິດສ່ວນບຸກຄົນ ແມ່ນໃຫ້ສ້າງຕັ້ງທຸລະກິດໃນຖານະບຸກຄົນທໍາມະດາ ແທນທີ່ຈະສ້າງຕັ້ງນິຕິບຸກຄົນໜຶ່ງແຍກຕ່າງຫາກ. ການສ້າງຕັ້ງທຸລະກິດໃນຮູບແບບນີ້ **ມີຄວາມຍືດຢຸ່ນ**ຫຼາຍກວ່າ ແລະ ມີລະບຽບຂັ້ນຕອນດ້ານການບໍລິຫານ ແລະ ຄ່າທໍານຽມຕ່າງໆໜ້ອຍທີ່ສຸດ, ແຕ່ກໍ່ມີຄວາມສ່ຽງສູງທີ່ສຸດ ເນື່ອງຈາກວ່າມັນຈະບໍ່ມີການໄຈ້ແຍກກັນລະຫວ່າງຊັບສິນສ່ວນຕົວຂອງຜູ້ປະກອບການ ແລະ ຊັບສິນທາງການຄ້າ.

## ບໍລິສັດ

ເພື່ອຫຼຸດຜ່ອນຄວາມສ່ຽງລົງ, ຜູ້ປະກອບການຫຼາຍຄົນເລືອກທີ່ຈະສ້າງຕັ້ງບໍລິສັດທີ່ໂດຍການສະເໜີໃຫ້ແຍກລະຫວ່າງຊັບສິນສ່ວນຕົວ ແລະຊັບສິນຂອງບໍລິສັດອອກຢ່າງເຂັ້ມງວດ. ໃນກໍລະນີນີ້, ໜີ້ສິນຂອງຄູ່ຮ່ວມທຸລະກິດ **ແມ່ນຖືກຈໍາກັດ**ຢູ່ພຽງແຕ່ມູນຄ່າຂອງຊັບສິນທີ່ພວກເຂົາປະກອບສ່ວນ. ບັນດາບໍລິສັດເງິນທຶນ ກໍ່ຍັງມີລັກສະນະທີ່ບໍ່ເປັນສ່ວນຕົວ ແລະ ອາໃສເງິນທຶນຈາກບັນດາຄູ່ຮ່ວມທຸລະກິດເປັນຫຼັກ. ຮູບແບບຂອງບໍລິສັດທີ່ມີໃຫ້ເຫັນຫຼາຍທີ່ສຸດແມ່ນ:

- **ບໍລິສັດມະຫາຊົນຈໍາກັດ** (SA) ເຊິ່ງຖືກສ້າງຕັ້ງຂຶ້ນໂດຍຜ່ານການຮ່າງເອກະສານທາງການທີ່ຖືກຮັບຮອງໂດຍເຈົ້າໜ້າທີ່ທະບຽນ. ຕົ້ນທຶນຂັ້ນຕໍ່າມູນຄ່າ 30,000 ເອີໂຣ ຈະຕ້ອງຖືກຈອງ ແລະ ຖອກສູງສຸດ 25% (7,500 ເອີໂຣ) ໃນເວລາທີ່ຮວມຕົວຕັ້ງເປັນບໍລິສັດ. ບໍລິສັດປະເພດ SA ອະນຸຍາດໃຫ້ຜູ້ຖືຮຸ້ນໃໝ່ເຂົ້າຮ່ວມໄດ້ ພ້ອມທັງອະນຸຍາດໃຫ້ເຂົ້າເຖິງຕະຫຼາດທຶນ.
- **ບໍລິສັດຈໍາກັດໜີ້ສິນ** (SARL) ເຊິ່ງກໍ່ຕ້ອງຖືກສ້າງຕັ້ງຂຶ້ນໂດຍຜ່ານການຮ່າງເອກະສານທາງການທີ່ຖືກຮັບຮອງໂດຍເຈົ້າໜ້າທີ່ທະບຽນເຊັ່ນກັນ. ຕົ້ນທຶນຂັ້ນຕໍ່າມູນຄ່າ 12,000 ເອີໂຣ ຈະຕ້ອງຖືກຈອງ ແລະ ຖອກເຕັມສ່ວນໃນເວລາກໍ່ຕັ້ງບໍລິສັດ. ຈຸດດີຂອງຮູບແບບ SARL ນີ້ແມ່ນ ຜູ້ຖືຮຸ້ນເບື້ອງຕົ້ນຈະໄດ້ຮັບສິດຫຼາຍກວ່າໃນການຄວບຄຸມກໍາມະສິດຂອງຮຸ້ນເພາະມັນຈະບໍ່ສາມາດຖືກຊື້ຂາຍໄດ້ຢ່າງເສລີ.
- **ບໍລິສັດຈໍາກັດໜີ້ສິນແບບລຽບງ່າຍ** (SARL-S) ສາມາດຖືກສ້າງຕັ້ງຂຶ້ນໄດ້ໂດຍບຸກຄົນທໍາມະດາທີ່ຖືໃບອະນຸຍາດດໍາເນີນທຸລະກິດຈາກກະຊວງເສດຖະກິດເທົ່ານັ້ນ. ການຮວມຕົວເຂົ້າເປັນບໍລິສັດໃນຮູບແບບນີ້ ອາດຈະເກີດຂຶ້ນໂດຍຜ່ານການຮ່າງເອກະສານສ່ວນຕົວທີ່ບໍ່ຖືກຮັບຮອງໂດຍເຈົ້າໜ້າທີ່ກໍ່ໄດ້. ຕົ້ນທຶນຂັ້ນຕໍ່າມູນຄ່າລະຫວ່າງ 1 ຫາ 12,000 ເອີໂຣ ຈະຕ້ອງຖືກຈອງ ແລະ ຖອກສູງສຸງ 100% ໃນເວລາກໍ່ຕັ້ງບໍລິສັດ.

ບໍລິສັດຮູບແບບອື່ນໆກໍ່ມີ ແຕ່ບໍ່ພົບເຫັນຫຼາຍ. ວິສາຫະກິດສ່ວນບຸກຄົນ ແລະ ບໍລິສັດ ຕ້ອງຂຶ້ນທະບຽນກັບ ຫ້ອງການທະບຽນທຸລະກິດຂອງລຸກຊໍາບວກ.

ມີຫຼາຍກວ່າ 750 ບໍລິສັດມະຫາຊົນຈໍາກັດ (SA) ທີ່ຖືກສ້າງຕັ້ງຂຶ້ນໃນປີ 2019

ຫ້ອງການທະບຽນທຸລະກິດລຸກຊໍາບວກ

ມີຫຼາຍກວ່າ 6,500 ບໍລິສັດຈໍາກັດໜີ້ສິນ (SARL) ທີ່ຖືກສ້າງຕັ້ງຂຶ້ນໃນປີ 2019

ຫ້ອງການທະບຽນທຸລະກິດລຸກຊໍາບວກ



ສໍາລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:
ສໍານັກງານຜູ້ປະກອບການ (House of Entrepreneurship)
ອີເມລ: info@houseofentrepreneurship.lu
ເບີໂທ: +352 42 39 39 330

www.tradeandinvest.lu
www.houseofentrepreneurship.lu
www.guichet.lu

# 3. ການກວດຄົນເຂົ້າ-ອອກເມືອງ

**ຜູ້ທີ່ຖືສັນຊາດຂອງປະເທດທີສາມ (ຜູ້ທີ່ບໍ່ຖືສັນຊາດຂອງປະເທດໃນເຂດເສດຖະກິດເອີຣົບ - ເຊິ່ງແມ່ນບັນດາລັດພາຄີຂອງສະຫະພາບເອີຣົບ, ອິດສະລັ່ງ, ນອກແວ ແລະ ເລັກເຕນສະເຕນ - ຫຼື ສັນຊາດຂອງປະເທດໃນສະມາພັນທະລັດສະວິດ) ທີ່ວາງແຜນວ່າຈະອາໃສຢູ່ໃນປະເທດລຸກຊຳບວກເປັນເວລາຫຼາຍກວ່າສາມເດືອນ (90 ວັນ) ຕ້ອງໄດ້ຂໍ ໃບອະນຸຍາດພັກອາໃສ ກ່ອນທີ່ຈະເຂົ້າມາໃນປະເທດ.**

## ໃບອະນຸຍາດພັກອາໃສ

ໃບຄຳຮ້ອງຂໍອະນຸຍາດພັກອາໃສຕ້ອງຖືກສົ່ງໄປຫາກົມກວດຄົນເຂົ້າ-ອອກເມືອງຂອງ**ກະຊວງການຕ່າງປະເທດ ແລະ ເອີຣົບຂອງລຸກຊຳບວກ.** ໃບອະນຸຍາດອາດທີ່ຂໍນັ້ນອາດເປັນໃນນາມຂອງພະນັກງານ, ຜູ້ປະກອບອາຊີບອິດສະຫຼະ, ນັກຮຽນ, ນັກຮຽນຝຶກງານ, ນັກຄົ້ນຄວ້າ, ສະມາຊິກໃນຄອບຄົວ ຫຼື ສຳລັບເຫດຜົນສ່ວນຕົວ.

ສຳລັບການພັກອາໃສທີ່ບໍ່ເກີນສາມເດືອນ, ຜູ້ທີ່ຖືສັນຊາດຂອງປະເທດທີສາມແມ່ນບໍ່ມີສິດດຳເນີນກິດຈະກຳໃດໆໃນຖານະພະນັກງານ ຫຼື ຜູ້ປະກອບອາຊີບອິດສະຫຼະໄດ້, ຍົກເວັ້ນແຕ່ວ່າໄດ້ຮັບອະນຸຍາດຢ່າງຊັດເຈນໂດຍລັດຖະມົນຕີ. ຜູ້ທີ່ຖືສັນຊາດຂອງປະເທດທີສາມທີ່ຕ້ອງການສ້າງຕັ້ງທຸລະກິດໃນລຸກຊຳບວກ ດ້ວຍການປະກອບອາຊີບອິດສະຫຼະຈຳເປັນຕ້ອງປະຕິບັດຕາມເງື່ອນໄຂຫລາຍດ້ານ.

## ຂໍອະນຸຍາດແນວໃດ?

**ກ່ອນທີ່ຈະເຂົ້າມາໃນປະເທດ,** ບຸກຄົນໃດໜຶ່ງຕ້ອງ:

- ຍື່ນໃບຄຳຮ້ອງກັບກົມກວດຄົນເຂົ້າ-ອອກເມືອງຂອງກະຊວງການຕ່າງປະເທດ ແລະ ເອີຣົບ;
- ຖືໜັງສືຜ່ານແດນທີ່ຖືກຕ້ອງ.

ຫຼັງຈາກນັ້ນ ບຸກຄົນດັ່ງກ່າວຈະໄດ້ຮັບການອະນຸຍາດໃຫ້ອາໃສຢູ່ຊົ່ວຄາວ. ຕໍ່ຈາກນັ້ນ ແມ່ນຕ້ອງໄດ້ຍື່ນສະໝັກຂໍວີຊາພັກເຊົາໄລຍະຍາວ (ປະເພດ D).

**ຫຼັງຈາກທີ່ເຂົ້າມາໃນປະເທດແລ້ວ,** ຜູ້ສະໝັກຕ້ອງ:

- ແຈ້ງກ່ຽວກັບການເຂົ້າປະເທດໃຫ້ແກ່ເຂດເທດສະບານທີ່ຕົນຈະພັກອາໃສຢູ່;
- ກວດສຸຂະພາບ;
- ຍື່ນຫຼັກຖານການຈ່າຍເງິນຄ່າບໍລິຫານມີມູນຄ່າ 80 ເອີໂຣ.

ຫຼັງຈາກທີ່ດຳເນີນຂັ້ນຕອນເຫຼົ່ານີ້ແລ້ວ, ຜູ້ສະໝັກຈະໄດ້ຮັບຈົດໝາຍແຈ້ງໃຫ້ຕົນໄປຮັບໃບອະນຸຍາດພັກອາໃສສະບັບຈິງ.

ຂໍ້ມູນສຳຄັນ:

ເມືອງທີ່ໜ້າຍ້າຍໄປຢູ່ເພື່ອເຮັດວຽກອັນດັບທີ 3 ຂອງໂລກ
ແຫຼ່ງຂໍ້ມູນ: AIRINC, ມີນາ 2019

ສະຖານທີ່ດີທີ່ສຸດອັນດັບທີ 3 ສຳລັບຄົນຕ່າງປະເທດໃນການສ້າງອາຊີບ
ແຫຼ່ງຂໍ້ມູນ: ດັດສະນີການເຮັດວຽກຢູ່ຕ່າງປະເທດຂອງຄົນຕ່າງຊາດປີ 2019 (Expat Insider Working Abroad Index 2019)

ປະເທດທີ່ເປັນສາກົນທີ່ສຸດໃນເອີຣົບ
ແຫຼ່ງຂໍ້ມູນ: Eurostat, 2019



ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:
ສຳນັກງານຜູ້ປະກອບການ (House of Entrepreneurship)
ອີເມລ: info@houseofentrepreneurship.lu
ເບີໂທ: +352 42 39 39 330

www.tradeandinvest.lu
www.houseofentrepreneurship.lu
www.guichet.lu

# 4. ມາດຕະການດ້ານການເງິນ ແລະ ການຊ່ວຍເຫຼືອ

ບໍລິສັດທີ່ສ້າງຕັ້ງ ມີຕົວຕົນທີ່ຍືນຍົງໃນປະເທດລຸກຊໍາບວກແລ້ວ ສາມາດໝູນໃຊ້ມາດຕະການດ້ານການເງິນ ແລະ ການຊ່ວຍເຫຼືອຫລາກຫລາຍໃນການຊ່ວຍ ຂະຫຍາຍກິດຈະການຂອງພວກເຂົາ, ພັດທະນາແນວຄິດ ແລະ ສິນຄ້າທີ່ເປັນນະວັດຕະກໍາໃໝ່ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ພວກເຂົາເຈົ້າໃຫ້ມີຄວາມສາມາດໃນການແຂ່ງຂັນ

## ການຊ່ວຍເຫຼືອລ້າໃນການລົງທຶນ

ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ທີ່ມີ**ໂຄງການລົງທຶນ** ທີ່ມີວັດຖຸປະສົງໃນການສົ່ງເສີມການສ້າງ, ການພັດທະນາ, ການສ້າງຄວາມຫຼາກຫຼາຍ ຫຼື ສ້າງການປ່ຽນແປງພື້ນຖານຂອງ ຂະບວນການຜະລິດ, ອາດຈະມີສິດໄດ້ຮັບ ການຊ່ວຍເຫຼືອລ້າໃນການລົງທຶນສໍາລັບ SMEs.

## ການຄົ້ນຄວ້າ & ການພັດທະນາ ແລະ ນະວັດຕະກໍາໃໝ່

ການຊ່ວຍເຫຼືອລ້າດ້ານການເງິນຈາກພາກລັດ ມີຄວາມເປັນໄປໄດ້ທີ່ຈະໄດ້ທຶນສົມທົບຕື່ມຈາກພາກເອກະຊົນໃຫ້ແກ່ບໍລິສັດທີ່ມີນະວັດຕະກໍາໃໝ່. ກະຊວງເສດຖະກິດຈະມອບ ເງິນອຸດໜູນສໍາລັບໂຄງການຄົ້ນຄວ້າ&ພັດທະນາ ແລະ ມີນະວັດຕະກໍາໃໝ່ ໃຫ້ແກ່ບໍລິສັດທີ່ມີກິດຈະກໍາທີ່ໂດດເດັ່ນໃນລຸກຊໍາບວກ. ໂຄງການສະໜັບສະໜຸນການຄົ້ນຄວ້າ&ພັດທະນາ ແລະ ນະວັດຕະກໍາໃໝ່ນັ້ນ ສາມາດຮ່ວມສະໜອງທຶນໃຫ້ແກ່ການສຶກສາຄວາມເປັນໄປໄດ້ ພ້ອມທັງການຄົ້ນຄວ້າ ແລະ ພັດທະນາຜະລິດຕະພັນທີ່ມີນະວັດຕະກໍາໃໝ່. ຄ່າໃຊ້ຈ່າຍຈະຖືກແທນຄືນໃຫ້ໂດຍອີງຕາມມູນຄ່າທີ່ເກີດຂຶ້ນຕົວຈິງ.

ການຊ່ວຍເຫຼືອອື່ນໆຍັງສາມາດຮ່ວມສະໜອງທຶນໃຫ້ກັບການປົກປ້ອງຊັບສິນທາງປັນຍາດ້ານວິຊາການ, ການບໍລິການໃຫ້ຄໍາປຶກສາຈາກພາຍນອກ ທີ່ກ່ຽວຂ້ອງກັບນະວັດຕະກໍາໃໝ່ ຫຼື ການຈັດສັນພະນັກງານທີ່ມີຄຸນວຸດທິສູງໃຫ້ມາປະຕິບັດວຽກງານໃຫ້ຊົ່ວຄາວ.

## ມາດຕະການສໍາລັບວິສາຫະກິດໜຸ່ມນ້ອຍທີ່ມີນະວັດຕະກໍາໃໝ່

ແຜນການຊ່ວຍເຫຼືອທີ່ສະເພາະເຈາະຈົງສໍາລັບວິສາຫະກິດໜຸ່ມນ້ອຍທີ່ມີນະວັດຕະກໍາໃໝ່ ສາມາດຮ່ວມສະໜອງທຶນ ເພື່ອຕອບສະໜອງຄວາມຕ້ອງການເງິນໝູນວຽນຂອງທຸລະກິດທີ່ເລີ່ມຕົ້ນໃໝ່ໃນໄລຍະເຕີບໂຕ ໂດຍການໃຫ້ເງິນລົງທຶນທຽບເທົ່າກັບມູນຄ່າຂອງຮຸ້ນທີ່ມີ.

## ການຄົ້ນຄວ້າລະດັບປະລິນຍາເອກ ແລະ ຫຼັງປະລິນຍາເອກ

ແຜນກອງທຶນຊ່ວຍເຫຼືອດ້ານການຝຶກອົບຮົມ ແລະ ການຄົ້ນຄວ້າ (AFR Grant Scheme) ຂອງ ສໍານັກງານກອງທຶນສະໜັບສະໜຸນການຄົ້ນຄວ້າແຫ່ງຊາດ ໃຫ້ການສະໜັບສະໜຸນໂຄງການຝຶກອົບຮົມກ່ຽວກັບການຄົ້ນຄວ້າໃນລະດັບປະລິນຍາເອກ ແລະ ຫຼັງປະລິນຍາເອກໃນ ແລະ ນອກປະເທດລຸກຊໍາບວກ.



ສໍາລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:
ສໍານັກງານຜູ້ປະກອບການ (House of Entrepreneurship)
ອີເມລ: info@houseofentrepreneurship.lu
ເບີໂທ: +352 42 39 39 330

# 5. ອາກອນ

**ບໍລິສັດໃນປະເທດລຸກຊຳບວກແມ່ນຕ້ອງໄດ້ເສຍອາກອນນິຕິບຸກຄົນ ແລະ ຕ້ອງໄດ້ຄິດໄລ່ອາກອນມູນຄ່າເພີ່ມເຂົ້າໃນສິນຄ້າ ແລະ ບໍລິການຂອງພວກເຂົາ. ບຸກຄົນໃດໜຶ່ງຈະຕ້ອງເສຍອາກອນອີງຕາມສະຖານະພາບສ່ວນຕົວຂອງພວກເຂົາ.**

## ກົດໝາຍວ່າດ້ວຍອາກອນນິຕິບຸກຄົນ

ອາກອນລາຍໄດ້ນິຕິບຸກຄົນ ໄດ້ຖືກລະບຸໄວ້ສຳລັບປີ 2020 ຢູ່ລະຫວ່າງ 15 ຫາ 17% ຂຶ້ນກັບຜົນກຳໄລຂອງບໍລິສັດອີງຕາມໃບສະຫຼຸບຊັບສິນບັດທາງການຄ້າ. ຄ່າໃຊ້ຈ່າຍເພີ່ມເຕີມ 7% ຈະຖືກເກັບຈາກອາກອນລາຍໄດ້ນິຕິບຸກຄົນ ເພື່ອເປັນການປະກອບສ່ວນເຂົ້າໃນກອງທຶນການຈ້າງງານ. ອາກອນທຸລະກິດຊຸມຊົນລະຫວ່າງ 6 ຫາ 12%, ອີງຕາມເຂດເທດສະບານ, ຍັງຈະຖືກເກັບກັບບໍລິສັດນິຕິບຸກຄົນເຊັ່ນກັນ.

ນອກຈາກນັ້ນ, ບໍລິສັດຍັງຈຳເປັນຕ້ອງໄດ້ເສຍອາກອນຄວາມມັ່ງຄັ່ງສຸດທິ ອີງຕາມມູນຄ່າຂອງຊັບສິນທັງໝົດ ແລະ ໂຄງຮ່າງຂອງໃບສະຫຼຸບຊັບສິນບັດ ນັບຕັ້ງແຕ່ 535 ຫາ 32,100 ເອີໂຣຕໍ່ປີ (ອາກອນຄວາມມັ່ງຄັ່ງຈະບໍ່ຖືກເກັບກັບວິສາຫະກິດສ່ວນບຸກຄົນ).

## ອັດຕາອາກອນມູນຄ່າເພີ່ມໃນປະເທດລຸກຊຳບວກ

ອັດຕາອາກອນມູນຄ່າເພີ່ມ ມາດຕະຖານ ທີ່ຖືກນຳໃຊ້ເພື່ອສະໜອງການບໍລິການໃນປະເທດລຸກຊຳບວກແມ່ນ 17% ເຊິ່ງແມ່ນ**ອັດຕາທີ່ຕ່ຳທີ່ສຸດໃນສະຫະພາບເອີຣົບ.**

ບໍລິສັດທີ່ຕ້ອງໄດ້ເສຍອາກອນມູນຄ່າເພີ່ມຈຳເປັນຕ້ອງໄດ້ແຈ້ງໜ່ວຍງານຈັດເກັບອາກອນທາງອ້ອມຕັ້ງແຕ່ເລີ່ມຕົ້ນ ເພື່ອທີ່ຈະໄດ້ຮັບ ເລກປະຈຳຕົວຜູ້ເສຍອາກອນມູນຄ່າເພີ່ມ.

## ອັດຕາອາກອນລາຍໄດ້ສ່ວນບຸກຄົນ

ຜູ້ທີ່ເຮັດວຽກໃນປະເທດລຸກຊຳບວກຈະຖືກຈັດໃສ່ໝວດອາກອນອີງຕາມສະຖານະພາບສ່ວນຕົວຂອງພວກເຂົາ. ເຊິ່ງມີສາມໝວດອາກອນດັ່ງລຸ່ມນີ້:

ໝວດອາກອນທີ 1:

- ແຕ່ງງານກັບຜູ້ເສຍອາກອນທີ່ເລືອກຈະເສຍອາກອນແຍກຕ່າງຫາກ;
- ຄົນໂສດ;
- ແຕ່ງງານກັບຜູ້ເສຍອາກອນທີ່ບໍ່ມີພູມລຳເນົາໃນປະເທດລຸກຊຳບວກ;

ໝວດອາກອນທີ 1a:

- ຜູ້ທີ່ອາຍຸ 65 ປີຂຶ້ນໄປ;
- ພໍ່/ແມ່ ລ້ຽງດ່ຽວທີ່ມີເດັກຢູ່ພາຍໃຕ້ການປົກຄອງ;

ໝວດອາກອນທີ 2:

- ຜູ້ເສຍອາກອນທີ່ແຕ່ງງານແລ້ວ;
- ຜູ້ເສຍອາກອນທີ່ເປັນໝ້າຍ (ສຳລັບສາມປີທຳອິດຫຼັງຈາກຜົວ/ເມຍເສຍຊີວິດ);
- ຜູ້ທີ່ຢ່າຮ້າງ ຫຼື ແຍກທາງກັນຢູ່ (ສຳລັບສາມປີທຳອິດ);
- ຄູ່ທີ່ໃຊ້ຊີວິດຮ່ວມກັນ;
- ແຕ່ງງານກັບຜູ້ເສຍອາກອນທີ່ບໍ່ມີພູມລຳເນົາໃນປະເທດລຸກຊຳບວກ.

ອັດຕາອາກອນລາຍໄດ້ ຂອງປະເທດລຸກຊຳບວກສຳລັບບຸກຄົນທົ່ວໄປ **ແມ່ນໜຶ່ງໃນອັດຕາທີ່ຕ່ຳທີ່ສຸດໃນເອີຣົບ,** ໂດຍສະເພາະສຳລັບຄົນທີ່ມີຄູ່. ອາກອນລາຍໄດ້ແມ່ນອີງໃສ່ 23 **ຂັ້ນອາກອນ** ແລະ ອັດຕາອາກອນສ່ວນເພີ່ມທີ່ສູງທີ່ສຸດແມ່ນ 42% ນັບແຕ່ປີ 2017.

ອີງຕາມ OECD, ຄູ່ຜົວເມຍທີ່ມີລູກສອງຄົນ ແລະ ມີເງິນເດືອນສອງພູດ (100% ແລະ 67% ຂອງເງິນເດືອນສະເລ່ຍ, ຕາມລຳດັບ) ຈະຕ້ອງໄດ້ເສຍອາກອນໃນອັດຕາລວມ 26% - ລວມທັງການປະກອບທຶນເຂົ້າໃນເງິນປະກັນສັງຄົມ.



ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:
ສຳນັກງານຜູ້ປະກອບການ (House of Entrepreneurship)
ອີເມລ: info@houseofentrepreneurship.lu
ເບີໂທ: +352 42 39 39 330

# 6. ປະກັນສັງຄົມ



**ປະເທດລຸກຊໍາບວກມີລະບົບປະກັນສັງຄົມທີ່ພັດທະນາ ແລະ ມີປະສິດທິພາບສູງ ທີ່ຄຸ້ມຄອງຫຼາກຫຼາຍສະຖານະການຢ່າງກວ້າງຂວາງ.**

## ລະບົບປະກັນສັງຄົມ

ລະບົບປະກັນສັງຄົມຂອງລຸກຊໍາບວກ ຄຸ້ມຄອງຄວາມສ່ຽງຈາກ **ການເຈັບເປັນ, ການເກີດລູກ, ຄວາມພິການ, ການເສຍຊີວິດ, ອາຍຸສູງ ແລະ ປະກັນອຸບັດຕິເຫດ**ທັງໃນຊີວິດສ່ວນຕົວ ແລະ ໃນຂອບເຂດວິຊາຊີບເຊັ່ນກັນ.

ທຸກໆບໍລິສັດຈໍາເປັນຕ້ອງໄດ້ຂຽນໃບແຈ້ງການດໍາເນີນງານ ແລະ ແຈ້ງມື້ເລີ່ມຕົ້ນການຈ້າງງານໃຫ້ແກ່ ສູນປະກັນສັງຄົມຮ່ວມ, ເຊິ່ງເປັນຜູ້ຈັດເກັບຂໍ້ມູນ, ຈົດທະບຽນຜູ້ເຂົ້າຮ່ວມ ແລະ ເກັບກໍາການປະກອບທຶນສໍາລັບກອງທຶນປະກັນໄພຕ່າງໆ.

ພວກເຂົາສາມາດ ເຂົ້າຮ່ວມ ແຜນປະກັນໄພຮ່ວມຂອງນາຍຈ້າງ ດ້ວຍຄວາສະໝັກໃຈ ເພື່ອຮັບມືກັບຄວາມຮັບຜິດຊອບດ້ານການເງິນທີ່ເກີດຈາກການສູນເສຍລາຍໄດ້ເນື່ອງຈາກຄວາມເຈັບປ່ວຍ.

ສະມາຊິກໃນຄອບຄົວຂອງຜູ້ທີ່ເຮັດອາຊີບອິດສະຫຼະທີ່ອາໃສສິດທິປະໂຫຍດສໍາລັບຜູ້ທີ່ເຮັດວຽກອິດສະຫຼະຈາກການປະກັນສຸຂະພາບຈະຖືກຮ່ວມຄຸ້ມຄອງຈາກການປະກັນໄພເຊັ່ນກັນ, ພາຍໃຕ້ເງື່ອນໄຂທີ່ວ່າ ພວກເຂົາບໍ່ໄດ້ຂຶ້ນທະບຽນເປັນການສ່ວນຕົວກັບປະກັນສັງຄົມຮ່ວມ. ເງື່ອນໄຂສໍາລັບການຂຶ້ນທະບຽນຮ່ວມກັນພາຍໃຕ້ແຜນປະກັນໄພອັນດຽວແມ່ນແຕກຕ່າງກັນອອກໄປ ຂຶ້ນກັບວ່າຜູ້ທີ່ໄດ້ຮັບການຄຸ້ມຄອງຈາກປະກັນໄພແມ່ນຜູ້ທີ່ມີພູມລໍາເນົາຢູ່ໃນປະເທດລຸກຊໍາບວກຫຼືບໍ່.

## ການປະກອບທຶນເຂົ້າໃນປະກັນສັງຄົມ

ການປະກອບທຶນເຂົ້າໃນປະກັນສັງຄົມກວມເອົາ 25% ຂອງເງິນເດືອນລວມທັງຫມົດ. ການປະກອບທຶນ 16% ຂອງເງິນເດືອນລວມແມ່ນສໍາລັບການປະກັນບໍານານ. ເຄິ່ງໜຶ່ງຂອງການປະກອບທຶນນີ້ (ເຊິ່ງລວມຢູ່ໃນການປະກອບທຶນເຂົ້າໃນປະກັນສັງຄົມທັງໝົດ) ແມ່ນຖືກຈ່າຍໂດຍນາຍຈ້າງ, ໃນຂະນະທີ່ອີກເຄິ່ງໜຶ່ງຈະຖືກຫັກໂດຍກົງຈາກເງິນເດືອນຂອງລູກຈ້າງ.

ລະບົບຮັກສາສຸຂະພາບຂອງລຸກຊໍາບວກ ຍັງຄົງເປັນລະບົບທີ່ດີທີ່ສຸດໃນໂລກ.

ແຫຼ່ງຂໍ້ມູນ: ດັດສະນີວັດແທກຄວາມມັ່ງຄັ່ງຂອງປະເທດປີ 2018 (The Legatum Prosperity Index), Legatum Institute, 2018

ປະເທດລຸກຊໍາບວກຖືກຈັດເປັນໜຶ່ງໃນປະເທດທີ່ມີການໃຊ້ຈ່າຍດ້ານສຸຂະພາບທີ່ສູງທີ່ສຸດ

ແຫຼ່ງຂໍ້ມູນ: ອົງການອະນາໄມໂລກ, 2019

ອາຍຸໄຂສະເລ່ຍຂອງຜູ້ທີ່ອາໃສຢູ່ປະເທດລຸກຊໍາບວກແມ່ນຢູ່ໃນກຸ່ມທີ່ສູງທີ່ສຸດໃນເອີຣົບ: 86 ປີ ສໍາລັບແມ່ຍິງ ແລະ 81 ປີສໍາລັບຜູ້ຊາຍ

ແຫຼ່ງຂໍ້ມູນ: ອົງການອະນາໄມໂລກ, 2018

# 7. ການຕັ້ງຖິ່ນຖານ

ປະເທດລຸກຊຳບວກແມ່ນປະເທດທີ່ໜ້າຢູ່ ແລະ ໃຫ້ຄວາມສົມດຸນລະຫວ່າງການໃຊ້ຊີວິດ ແລະການເຮັດວຽກ ທີ່ດີຫຼາຍ. ການເດີນທາງໄລຍະສັ້ນຊ່ວຍໃຫ້ທ່ານມີສຸຂະພາບທີ່ດີ ມີຄວາມສົມດຸນ ແລະຫວ່າງຊີວິດຄອບຄົວ ແລະ ສັງຄົມຫມູ່ຄູ່ ທີ່ມີຄວາມສຸກ. ເມືອງລຸກຊຳບວກແມ່ນຖືກຈັດຢູ່ໃນອັນດັບທີ 1 ໃນ 230 ເມືອງ ດ້ານຄວາມປອດໄພ ອີງຕາມຜົນການສຳຫຼວດຄຸນນະພາບຊີວິດຂອງເມີເຊີໃນປີ 2019 (Mercer's Quality of Living Survey).

## ການຊອກຫາທີ່ພັກອາໃສ

ມີຫຼາກຫຼາຍແຫຼ່ງທີ່ສາມາດໃຫ້ຂໍ້ມູນກັບທ່ານກ່ຽວກັບຕະຫຼາດອະສັງຫາລິມະຊັບ. ເວັບໄຊ້ຂອງໜ່ວຍງານສັງເກດການກ່ຽວກັບທີ່ຢູ່ອາໃສ ຂອງປະເທດລຸກຊຳບວກ ສາມາດໃຫ້ຂໍ້ມູນກ່ຽວກັບລາຄາຂອງເຮືອນອີງຕາມທີ່ຕັ້ງ, ທັງສຳລັບໃຫ້ເຊົ່າ ແລະ ຊື້ ແລະ ຍັງມີອີກຫຼາຍເວັບໄຊ້, ບໍລິສັດຕົວແທນຊື້ຂາຍອະສັງຫາລິມະຊັບ ແລະ ບໍລິສັດຕົວແທນໃນການຍົກຍ້າຍຖິ່ນຖານ ທີ່ສາມາດຊ່ວຍທ່ານຊອກຫາທີ່ພັກທີ່ເໝາະສົມສຳລັບທ່ານໄດ້.

## ບໍລິສັດຕົວແທນໃນການຍົກຍ້າຍຖິ່ນຖານ

ບໍລິສັດຕົວແທນໃນການຍົກຍ້າຍຖິ່ນຖານສາມາດຊ່ວຍເຫຼືອທ່ານກ່ຽວກັບລະບຽບ**ຂັ້ນຕອນດ້ານການບໍລິຫານ** ແລະ ໃຫ້ຄວາມຊ່ວຍເຫຼືອແກ່ຄົນຕ່າງປະເທດທີ່ກຳລັງຍ້າຍຖິ່ນມາປະເທດລຸກຊຳບວກ **ຕາມຄວາມຕ້ອງການສ່ວນບຸກຄົນ**. ທີມງານຂອງພວກເຂົາທີ່ເວົ້າໄດ້ຫຼາຍພາສາຈະໃຫ້ການຊ່ວຍເຫຼືອດ້ານການຂົນສົ່ງ ເພື່ອເຮັດໃຫ້ການຕັ້ງຖິ່ນຖານໃນປະເທດລຸກຊຳບວກເປັນໄປຢ່າງງ່າຍດາຍທີ່ສຸດເທົ່າທີ່ຈະເປັນໄປໄດ້.

## ຫ້ອງການສຳລັບທຸລະກິດຂອງທ່ານ

ໃນປະເທດລຸກຊຳບວກ, ມີຫຼາຍທາງເລືອກຂອງຫ້ອງການສ່ວນຕົວສຳລັບບໍລິສັດຂອງທ່ານ. ມີທີ່ດິນ ແລະ ຕຶກທີ່ອອກແບບມາສະເພາະສຳລັບບໍລິສັດ ໃນເຂດອຸດສາຫະກຳ ແລະ ເຂດທຸລະກິດ.

ມີຫຼາຍສູນກໍ່ສ້າງບົ່ມເພາະທຸລະກິດຂອງທັງພາກລັດ ແລະ ເອກະຊົນທີ່ສະໜອງພື້ນທີ່ ທີ່ສາມາດໃຊ້ເປັນຫ້ອງການໄດ້ເຊັ່ນກັນ. ເຊິ່ງສ່ວນຫຼາຍຈະເນັ້ນໃສ່ກິດຈະການສະເພາະຂະແໜງການ ແລະ ກິດຈະການ**ໃນດ້ານເຕັກໂນໂລຊີ ແລະ ທີ່ມີນະວັດຕະກຳໃໝ່**. ບໍລິສັດໃດທີ່ຕ້ອງການເຂົ້າຮ່ວມການບົ່ມເພາະຈຳເປັນຕ້ອງໄດ້ປະຕິບັດຕາມລະບຽບຂັ້ນຕອນຂອງການສະໝັກ ເຊິ່ງໂດຍທົ່ວໄປແລ້ວຈະລວມມີການຍື່ນແຜນທຸລະກິດ, ການສຳພາດ ແລະ ການຄັດເລືອກຈາກຄະນະກຳມະການໃນຂັ້ນສຸດທ້າຍ.

**ເມືອງທີ່ປອດໄພທີ່ສຸດອັນດັບທີ 1 ໃນໂລກ**

ແຫຼ່ງຂໍ້ມູນ: ການສຳຫຼວດຄຸນນະພາບຊີວິດຂອງເມີເຊີປີ 2019

**ເມືອງທີ່ມີຄວາມຕຶງຄຽດໜ້ອຍທີ່ສຸດອັນດັບທີ 2 ໃນໂລກ**

ແຫຼ່ງຂໍ້ມູນ: ການຈັດອັນດັບເມືອງທີ່ມີຄວາມຕຶງຄຽດໜ້ອຍທີ່ສຸດ ແລະ ຫຼາຍທີ່ສຸດໃນໂລກ ປີ 2017 (Zipjet The 2017 Global Least and Most Stressful Cities Ranking)



ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:
ສຳນັກງານຜູ້ປະກອບການ (House of Entrepreneurship)
ອີເມລ: info@houseofentrepreneurship.lu
ເບີໂທ: +352 42 39 39 330

www.tradeandinvest.lu
www.houseofentrepreneurship.lu
www.guichet.lu

# 8. ການສຶກສາໃນປະເທດລຸກຊໍາບວກ

ໂຮງຮຽນໃນປະເທດລຸກຊໍາບວກມີການເຕີບໃຫຍ່ຂະຫຍາຍຕົວຢູ່ຕະຫຼອດເວລາໃນທົ່ວປະເທດ ເພື່ອຕ້ອນຮັບນັກຮຽນ ແລະ ນັກສຶກສາຕ່າງຊາດທີ່ຫຼາຍຂຶ້ນຢ່າງບໍ່ຢຸດຢັ້ງ. ການເຂົ້າໂຮງຮຽນແມ່ນພາກບັງຄັບສໍາລັບເດັກນ້ອຍອາຍຸ 4 ຫາ 16 ປີ ແລະ ມີໄລຍະການຮຽນຕໍ່າສຸດ 12 ປີ, ທີ່ແບ່ງອອກເປັນໂຮງຮຽນຊັ້ນປະຖົມ ແລະ ມັດທະຍົມ.

## ເຮືອນລ້ຽງເດັກ ແລະ ອະນຸບານ

ເຮືອນລ້ຽງເດັກມີລາຄາທີ່ບໍ່ແພງ ແລະ ໃຊ້ຫຼາຍພາສາ ເຊິ່ງໃນປະຈຸບັນມີຫຼາຍກວ່າ 500 ເຮືອນລ້ຽງເດັກໃນລຸກຊໍາບວກທີ່ແມ່ນທັງຂອງພາກລັດ ແລະ ເອກະຊົນ. ສໍາລັບເດັກນ້ອຍໜຶ່ງຄົນ, ແຕ່ລະອາທິດຈະໄດ້ຮັບການລ້ຽງເດັກ 20 ຊົ່ວໂມງຟຣີ. ສອງປີທໍາອິດຂອງການສຶກສາພາກບັງຄັບສໍາລັບເດັກນ້ອຍອາຍຸລະ 4 ຫາ 6 ປີ ແມ່ນຢູ່ອະນຸບານ (ຫຼື ທີ່ເອີ້ນວ່າ “Spillschoul”).

## ໂຮງຮຽນປະຖົມ

ເດັກນ້ອຍທຸກຄົນທີ່ຮອດອາຍຸ 6 ປີ ກ່ອນຫຼືໃນວັນທີ 01 ກັນຍາຂອງແຕ່ລະປີ ຈະຕ້ອງໄດ້ເລີ່ມຕົ້ນການສຶກສາໃນໂຮງຮຽນປະຖົມ. ເດັກນ້ອຍຈະໄດ້ຮຽນ**ພາສາເຢຍລະມັນ** ແລະ ເລີ່ມຮຽນ**ພາສາຝຣັ່ງ**ໃນປີທີສອງ. **ພາສາອັງກິດແມ່ນ**ຈະເລີ່ມຮຽນໃນຊັ້ນມັດທະຍົມເທົ່ານັ້ນ.

ບາງໂຮງຮຽນຈະສອນເປັນພາສາອັງກິດເປັນຫຼັກ. ທາງເລືອກອື່ນນອກເໜືອຈາກການສຶກສາຈາກພາກລັດ ແມ່ນໂຮງຮຽນເອກະຊົນ ແລະ ໂຮງຮຽນນານາຊາດຫຼາຍແຫ່ງ, ແລະ ບາງບ່ອນກໍ່ສອນເປັນພາສາອັງຕັ້ງແຕ່ເລີ່ມຕົ້ນ.

## ການສຶກສາຊັ້ນມັດທະຍົມ

ເນື່ອງຈາກປະເທດລຸກຊໍາບວກມີແຮງງານທີ່ເປັນສາກົນ ແລະ ມີເອກະລັກ, ໂຮງຮຽນລັດ (ບໍ່ເສຍຄ່າ) ແລະ ໂຮງຮຽນເອກະຊົນມີການສິດສອນທີ່ຫຼາກຫຼາຍ ແລະ ມີພື້ນຖານທີ່ຍາວນານ. ນອກເໜືອຈາກລະບົບການຮຽນປົກກະຕິແບບລຸກຊໍາບວກແລ້ວ, ໂຮງຮຽນນານາຊາດຫຼາຍແຫ່ງກໍ່ມີການສິດສອນເປັນພາສາອັງກິດ ແລະ ຝຣັ່ງເຊັ່ນກັນ.

## ການສຶກສາຊັ້ນສູງ

ສ້າງຕັ້ງຂຶ້ນໃນປີ 2003, ມະຫາວິທະຍາໄລລຸກຊໍາບວກ ແມ່ນມະຫາວິທະຍາໄລທີ່ໃຊ້ຫຼາຍພາສາ, ເປັນສາກົນ ແລະ ມີການຄົ້ນຄວ້າສູງຫຼາຍ. ມີສາມຄະນະວິຊາ ແລະ ສາມສູນສະຫະວິຊາການ ແລະ ຖືກຈັດໃຫ້ເປັນໜຶ່ງໃນມະຫາວິທະຍາໄລທີ່ເປັນສາກົນທີ່ສຸດໃນເອີຣົບ. ມະຫາວິທະຍາໄລລຸກຊໍາບວກໄດ້ສ້າງສາຍສໍາພັນການຮ່ວມມືກັບມະຫາວິທະຍາໄລ 78 ແຫ່ງໃນທົ່ວໂລກ.

ເປັນປະເທດທີ່ມີຈໍານວນພາສາເວົ້າໂດຍສະເລ່ຍຂອງປະຊາກອນອັນດັບທີ 1 ໃນບັນດາປະເທດໃນສະຫະພາບເອີຣົບ (3.6 ພາສາ)

ແຫຼ່ງຂໍ້ມູນ: Eurobarometer, 2019

41% ຂອງປະຊາກອນທີ່ເຮັດວຽກມີລະດັບການສຶກສາຊັ້ນສູງ

OECD, 2019



ສໍາລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:
ສໍານັກງານຜູ້ປະກອບການ (House of Entrepreneurship)
ອີເມລ: info@houseofentrepreneurship.lu
ເບີໂທ: +352 42 39 39 330

www.tradeandinvest.lu
www.houseofentrepreneurship.lu
www.guichet.lu